ບົດລາຍງານ ສະພາບມົນລະພິດທາງອາກາດ ແລະ ບັນຫາໝອກຄວັນ ແຂວງສະຫວັນນະເຂດ

ນຳສະເໜີໂດຍ: ທ່ານ ແສນສັກ ພົມວົງສາ

ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ

ຄັ້ງວັນທີ 27 – 28 ສິງຫາ (08) 2024

ທີ່ໂຮງແຮມສຸພັດຕຣາ, ແຂວງຫຼວງພະບາງ

I. ສະພາບລວມ

❒ແຂວງສະຫວັນນະເຂດ ຕັ້ງຢູ່ພາກກາງຕອນໃຕ້ ຂອງ ສປປ ລາວ ນອນຢູ່ໃນເສັ້ນແວງທີ $105^{0}46'48''$ ຕາເວັນອອກ ແລະ ເສັ້ນຂະໜານທີ $16^{0}32'24''$ ເໜືອ ມີເນື້ອທີ່ 2,177,400 ha , ມີສາຍແດນຕິດຈອດບັນດາແຂວງ ແລະ ປະເທດໃກ້ຄຽງດັ່ງລຸ່ມນີ້:

- ທິດຕາເວັນອອກ ຕິດກັບ ປະເທດໄທ ມີຄວາມຍາວ 152 km;
- ທິດໃຕ້ ຕິດກັບ ແຂວງສາລະວັນ ມີຄວາມຍາວ 259 km;
- ທິດຕາເວັນອອກ ຕິດກັບ ສສ ຫວຽດນາມ ມີຄວາມຍາວ 122 km;
- ທິດເໜືອຕິດກັບແຂວງຄຳມ່ວນ ມີຄວາມຍາວ 314 km.

❒ ພູມສັນຖານຂອງແຂວງສະຫວັນນະເຂດ ໄດ້ແບ່ງອອກເປັນສອງເຂດໃຫຍ່ຄື: **(1)** ເຂດທົ່ງພຽງ ປະກອບມີ 9 ເມືອງ 1 ນະຄອນ ກວມເອົາ 59% ເຊິ່ງມີຄວາມສູງຈາກລະດັບນ້ຳທະເລ 140 – 200 m, (2) ເຂດພູພຽງປະກອບມີ 5 ເມືອງ ກວມເອົາ 41% ເຊິ່ງມີຄວາມສູງຈາກລະດັບນ້ຳທະເລ 200 m.

II. ສະພາບຄຸນນະພາບທາງອາກາດ

ປະຈຸບັນແຂວງສະຫວັນນະເຂດ ແມ່ນມີທ່າແຮງຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ແລະ ເຂດພື້ນທີ່ການຜະລິດທາງດ້ານອຸດສາຫະກຳ. ເຮັດໃຫ້ການເພີ່ມຂຶ້ນຂອງຍານພາຫະນະນັບມື້ເພີ່ມຂຶ້ນ ໂດຍສະເພາະ ແຂວງສະຫວັນນະເຂດໄດ້ເປັນແຂວງທາງຜ່ານ ທີ່ມີການຈັນຈອນ ແລະ ຂົນສົ່ງເພີ່ມຂຶ້ນ. ຄ່ຽງຄູ່ກັບການເພີ່ມຂຶ້ນດັ່ງກ່າວ ແມ່ນເປັນສາເຫດຂອງມົນລະພິດທາງອາກາດ. ເຊິ່ງແຂວງສະຫວັນນະເຂດ ແມ່ນຍັງບໍ່ທັນໄດ້ມີການເກັບກຳຂໍ້ມູນທາງດ້ານຄຸນນະພາບທາງອາກາດທີເປັນລະບົບ ເຊິ່ງຂໍ້ມູນທີ່ມີໃນປະຈຸບັນຈະເປັນຂໍ້ມູນພື້ນຖານ ແລະ ຕິດຕາມຄຸນນະພາບອາກາດ (Bassline Ambient Air Quality) ທີ່ແຂວງສະຫວັນນະເຂດ ເພື່ອເປັນເກນກຳນົດມາດຕະຖານໃນການແກ້ໄຂ ແລະ ຫຼຸດຜ່ອນມົນລະພິດທາງອາກາດຢ່າງໃກ້ສິດ.

ໝອກຄວັນ ແລະ ຝຸ່ນລະອອງ ເກີດຈາກເສັ້ນທາງ, ການຄົມມະນາຄົມ, ພະລັງງານ, ການກໍ່ສ້າງ ຕຶກອາຄານ, ການຜະລິດກະສິກຳ, ອຸດສາຫະກຳ, ພ້ອມທັງໄພທຳມະຊາດ ແລະ ກິດຈະກຳຕ່າງໆ ຂອງມະນຸດອັນເປັນສາເຫດລວມ ທີ່ກໍ່ໃຫ້ເກີດມົນລະພິດທາງອາກາດ. ການເຜົາໄໝ້ເຊື້ອເພີງຟໍເຊາ ແລະ ການໃຊ້ຟືນກໍ່ເປັນບັນຫາຕົ້ນໆ ທີ່ສ້າງທາດອາດເຮືອນແກ້ວ ເຊັ່ນ: ການເຜົາໄໝ້ນ້ຳມັນເຊື້ອໄຟຕ່າງໆ, ໂຮງງານຜະລິດຖ່ານຂາວ, ການດັງຟືນໃນຄົວເຮືອນ, ການຈູດຂີ້ເຫຍື້ອ, ໄຟໄໝ້ປ່າ ແລະ ອື່ນໆ.

III.ຈຸດຕິດຕາມຄຸນນະພາບອາກາດ

➲ ຈຸດສະຖານີ ອຸຕຸນິຍົມ ແລະ ອຸທົກກະສາດ ແຂວງສະຫວັນນະເຂດ

ສະຖານທີ ຕິດຕາມກວດກາຄຸນນະພາບອາກາດ PM 2.5 ແມ່ນຕັ້ງຢູ່ໃນບໍລິເວນຮົ້ວຂອງສະຖານີ ອຸຕຸນິຍົມ ແລະ ອຸທົກກະສາດ



ຮູບສະຖານທີ່ວັດແທກສະພາບອາກາດ


IV.ການປະເມີນຜົນຕິດຕາມກວດກາ

1. ການຕິດຕາມກວດສະພາບມົນລະພິດທາງອາກາດ PM 2.5 ແຂວງສະຫວັນນະເຂດ

ຜົນການວັດແທກຝຸ່ນລະອອງ ທີ່ມີຂະໜາດນ້ອຍກວ່າ 2.5 ໄມຄຣອນ (PM 2.5) ລາຍວັນ 24 ຊົ່ວໂມງ ປີ 2024 ສະຖານີ ອຸຕຸນິຍົມ ແລະ ອຸທົກກະສາດ ນະຄອນໄກສອນ ແຂວງ ສະຫວັນນະເຂດ.

- ຄ່າສະເລ່ຍຕ່ຳສຸດ ເລີ່ມແຕ່ເດືອນມັງກອນ (01) ຫາ ເດືອນ ສິງຫາ (08) 2024 ເທົ່າກັບ $\mathbf{10\ \mu g/m^3}$
- ຄ່າສະສູງສຸດເລີ່ມແຕ່ ເດືອນມັງກອນ (01) ຫາ ເດືອນ ສິງຫາ (08) 2024 ເທົ່າກັບ $\mathbf{49.4\ \mu g/m^3}$

(ແມ່ນຢູ່ໃນລະດັບ **ປານກາງ** ຖ້າທຽບໃສ່ກັບມາດຖານສິ່ງແວດລ້ອມແຫ່ງຊາດ $\mathbf{50\ \mu g/m^3}$)



ຮູບສະແດງຄວາມເຂັ້ມຂຸ້ນຂອງ PM 2.5

2. ການຕິດຕາມກວດກວດກາ ໝອກຄວັນ ລະດູແລ້ງ ແຂວງສະຫວັນນະເຂດ

ຜົນການລົງເກັບກຳຂໍ້ມູນການຈູດປ່າເຮັດໄຮ່ ຂອງບັນດາເມືອງພູພຽງສາມາດສະຫຼຸບໄດ້ດັ່ງນີ້:

- ເມືອງ ວິລະບູລີ ການຈູດປ່າເຮັດໄຮ່ ແລະ ສ່ວນ ປະກອບມີ **20 ບ້ານ** ພື້ນທີ່ເສຍຫາຍ **510 ha** (ໄດ້ຮັບຜົນກະທົບ ໝອກຄວັນເລັກໜ້ອຍ)
- ເມືອງ ນອງ ໄຟລາມປ່າເຮັດສວນປູກມັນຕົ້ນ ປະກອບມີ **10 ບ້ານ** ພື້ນທີ່ເສຍຫາຍ **275 ha** (ໄດ້ຮັບຜົນກະທົບໝອກ ຄວັນເລັກໜ້ອຍ)
- ເມືອງ ເຊໂປນ ໄຟລາມປ່າເຮັດເຮັດໄຮ່ ປະກອບ **17 ບ້ານ** ພື້ນທີ່ເສຍຫາຍ **960 ha** (ໄດ້ຮັບຜົນກະທົບໝອກຄວັນ ເລັກໜ້ອຍ)

ຂໍຂອບໃຈ